ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ໂຮງຮຽນອະນຸບານ ທຫລ
# ຈັດກອງປະຊຸມພົບປະຜູ້ປົກຄອງເດັກ




ໃນຕອນເຊົ້າຂອງວັນທີ 24 ສິງຫາ 2019 ທີ່ຜ່ານມາ, ໂຮງຮຽນອະນຸບານທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມພົບປະຜູ້ປົກຄອງເດັກ ເພື່ອເປັນການປຶກສາຫາລືໃນການກະກຽມເປີດສົກຮຽນໃໝ່ ທີ່ຈະໄດ້ໄຂຂຶ້ນໃນເວລາອັນໃກ້ໆນີ້. ໂດຍການເປັນປະທານຂອງທ່ານ ສາຍສະໝອນ ກົບເກສອນ ຮອງຫົວໜ້າຫ້ອງການ ທຫລ (ຜູ້ຊີ້ນຳ) ພ້ອມດ້ວຍ ຄູອາຈານ, ພະນັກງານ, ແມ່ລ້ຽງເດັກ ແລະ ຜູ້ປົກຄອງນັກຮຽນເຂົ້າຮ່ວມຫຼາຍກວ່າ 200 ຄົນ.

ກອງປະຊຸມໄດ້ຮັບຟັງການລາຍງານສະຫຼຸບການເຄື່ອນໄຫວຂອງໂຮງຮຽນອະນຸບານ ທຫລ ໃນສົກປີ 2018-2019 ແລະ ທິດທາງແຜນການໃນຕໍ່ໜ້າ, ບັນດາມາດຖານ ແລະ ເງື່ອນໄຂຂອງເດັກນັກຮຽນທີ່ຈະສະໝັກເຂົ້າເປັນນັກຮຽນທີ່ໂຮງຮຽນອະນຸບານ ທຫລ, ພ້ອມທັງໄດ້ມີການສະເໜີແລກປ່ຽນຄຳຄິດເຫັນລະຫວ່າງ ພະນັກງານຄູອາຈານ ແລະ ພໍ່ແມ່ຜູ້ປົກຄອງເດັກ ຕໍ່ບາງບັນຫາໃນການປະຕິບັດວຽກງານຂອງໂຮງຮຽນອະນຸບານ ທຫລ.





ກອງປະຊຸມໄດ້ດຳເນີນໄປເປັນເວລາເຄິ່ງວັນ, ບັນດາຜູ້ປົກຄອງໄດ້ມີການນຳສະເໜີຫຼາຍບັນຫາ ແລະ ໄດ້ມີການປຶກສາຫາລື ເພື່ອຫາທິດທາງແກ້ໄຂບັນຫາຮ່ວມກັນກັບພະນັກງານ-ຄູອາຈານຂອງໂຮງຮຽນອະນຸບານ ທຫລ ເພື່ອປັບປຸງບາງບັນໃຫ້ໃຫ້ດີຂຶ້ນເທື່ອລະກ້າວ.

**# ຂ່າວ-ພາບ: ວັນປະເສີດ ສີມບູນຂັນ.**

## ເງິນກີບຄືກຽດສັກສີຂອງຊາດ ໃຊ້ຈ່າຍສະຫຼາດ ຊາດພັດທະນາ